# ບົດຮຽນໂຮງຮຽນວັນອາທິດ
## ວັນອາທິດ ທີ 31 ມົກຣາ 2010 (1-31-2010)

---

## ບຸກບໍ້າກັບວຽກງານ

**ຂໍ້ພຣະຄັມພີໃນບົດຮຽນ:** ປັນຍາຈານ 2:18-26;5:18-20

## ບົດຮຽນນີ້ສາມາດມີຜົນສະທ້ອນຕໍ່ຊີວິດຂອງທ່ານຢ່າງໃດ

ບົດຮຽນນີ້ສາມາດຊ່ວຍທ່ານໃຫ້ມອງເຫັນໄດ້ວ່າວຽກການແມ່ນຂອງຂວັນຈາກພຣະເຈົ້າໃນການທີ່ທ່ານສາມາດແລະຄວນຈະຊົມຊື່ນຍິນດີ.

## ບົດຮຽນນີ້ເວົ້າກ່ຽວກັບຫຍັງ

ບົດຮຽນນີ້ແມ່ນກ່ຽວກັບຜົນປໂຍດທີ່ອາດຈະເກີດຂຶ້ນແລະພຣະພອນຕ່າງໆຈາກການເຮັດວຽກເມື່ອພຣະເຈົ້າຊົງນຳພາ.

## ເປັນຫຍັງບົດຮຽນນີ້ຈຶ່ງສຳຄັນ

ມີຫຼາຍຄົນອຸທິດຊີວິດຂອງພວກເຂົາໃສ່ວຽກງານແລະຖືກວຽກງານກືນກິນຊຶ່ງມັນເປັນເຄື່ອງທຳລາຍສາຍສຳພັນແລະການລົດຄຸນຄ່າຊີວິດຝ່າຍຈິດວິນຍານຂອງພວກເຂົາ. ຫຼາຍຄົນກໍພົບວ່າວຽກການຂອງພວກເຂົາໜ້າເບື່ອແລະບໍ່ມີຄວາມໝາຍ. ຜູ້ທີ່ສຶກສາບົດຮຽນນີ້ສາມາດເລີ້ມຮຽນຮູ້ແລະຄົ້ນພົບຄວາມໝາຍຈາກການເຮັດວຽກແລະມີຄວາມຍິນດີໃນຜົນຈາກວຽກງານຂອງພວກເຂົາວ່າເປັນຂອງຂວັນຈາກພຣະເຈົ້າ.

ຖ້າຕິດຕັ້ງກ້ອງຖ່າຍຮູບໄວ້ຈັບເບິ່ງໃບໜ້າຕອນທີ່ທ່ານກຳລັງໄປການແລະຕອນກັບມາບ້ານມັນຈະເຫັນແນວໃດ? ຖ້າວ່າໜ້າຂຶມກ່ອນ ຫຼັງຈາກນັ້ນກໍໜ້າຍິ້ມ, ນີ້ຄືງບອກໃຫ້ຮູ້ວ່າ"ຂ້ອຍຊັງວຽກນີ້"? ຢ່າງທີສອງຄືງຈະແມ່ນໜ້າຍິ້ມແຍ້ມຕອນໄປການແລະໜ້າຂຶມບໍ່ຢາກອອກຈາກການ. ບາງຄົນກໍເມົາກັບວຽກ, ເມື່ອຄົ້ນພົບວ່າຄວາມພໍໃຈອອກມາຈາກຂນະທີ່ຢູ່ກັບວຽກແຕ່ພຽງເທົ່ານັ້ນ. ຖ້າວ່າເມື່ອເຫັນໜ້າຍິ້ມກ່ອນ, ຫຼັງຈາກນັ້ນກໍເຫັນໜ້າຍິ້ມອີກຈະໝາຍຄວາມວ່າຢ່າງໃດ? ບາງທີນັ້ນໝາຍເຖິງກິຣິຍາທີ່ສົມບູນດີ-ສຳລັບຄົນທີ່ພົບປະສົບການກັບຄວາມໝາຍໃນວຽກຂອງພວກເຂົາ, ແຕ່ບໍ່ພົບຄວາມໝາຍອັນແທ້ຈິງຂອງພວກເຂົາໃນວຽກການ.

ວຽກການບໍ່ແມ່ນສິ່ງທີ່ຈະທົດແທນພຣະເຈົ້າໄດ້ແຕ່ວ່າແທນທີ່ຈະເປັນຢ່າງນັ້ນມັນເປັນຂອງຂວັນຈາກພຣະອົງແລະເປັນພຣະພອນແກ່ພວກເຮົາ. ການສຶກສາພຣະທັມຂອງພຣະເຈົ້າຈະຊ່ວຍພວກເຮົາໃຫ້ເຫັນວຽກຕ່າງໆຂອງພວກເຮົາ, ຈະເປັນການອາສາສມັກຫຼືໄດ້ຮັບຄ່າຈ້າງ, ມັນຈະນຳຜົນປໂຍດຍິ່ງໃຫຍ່ເມື່ອພຣະເຈົ້າຊົງເປັນຜູ້ຄວບຄຸມ.

## <u>ສຶກສາພຣະຄັມພີ</u>

### 1. <u>ວຽກຂອງຂ້າພະເຈົ້າ-ມໍຣະດົກຂອງຂ້າພະເຈົ້າ:</u> (ປັນຍາຈານ 2:18-23)

ພວກເຮົາໄດ້ໃຊ້ພາກສ່ວນໃຫຍ່ຂອງຊີວິດໃນການເຮັດວຽກງານ, ທັງຢູ່ພາຍໃນຫຼືພາຍນອກເຮືອນ. ນັກສຳຣວດຄົນນຶ່ງພົບວ່າຄົນອະເມຣິກັນໄດ້ໃຊ້ເວລາ 50 ເປີເຊັນໃນວຽກງານຫຼາຍກວ່າຊາວເອີຣົບຕາເວັນຕົກ. ສຳລັບບາງຄົນມີສາຍສຳພັນກັບເພື່ອນຮ່ວມງານເຂັ້ມແຂງກວ່າສະມາຊິກຄອບຄົວທີ່ຢູ່ຕ່າງຖິ່ນຫ່າງໄກກັນ. ພວກທີ່ເຖິງກະສຽນສ່ວນຫຼາຍຂ້ອນຂ້າງຈະພົບພໍ້ຄວາມເພິ່ງພໍໃຈສ່ວນຕົວແລະຄຸນຄ່າ-ຕົວເອງຈາກວຽກຂອງພວກເຂົາຫຼືຢ່າງໜ້ອຍກໍຂ້ອນຂ້າງເປັນໃນທຳນອງນັ້ນ.

ອັນຕລາຍທີ່ໄດ້ຮັບຈາກຄວາມໝາຍຂອງຊີວິດຜ່ານທາງວຽກງານກໍຄືວຽກງານເປັນຂອງບໍ່ຍືນຍາວເປັນກິຈກັມຊົ່ວຄາວ ພວກມັນສາມາດທີ່ຈະພາກຈາກພວກເຮົາໄປໄດ້, ອາດຈະເປັນການໝົດວຽກຫຼືອອກກິນເບັ້ຽບຳນານ. ຖ້າວ່າບຸກຄະລິກສ່ວນຕົວແລະຄວາມໝາຍຂອງຊີວິດພົບໃນວຽກງານ, ຈະມີຫຍັງເກີດຂຶ້ນຖ້າວ່າງານນັ້ນຫາກໝົດໄປ?

ໂຊໂລໂມນໄດ້ທົບທວນວຽກການຂອງລາວໃນວິງການທີ່ລາວບັນລະຍາຍວ່າ**ໃຕ້ດວງອາທິດ** . ປໂຍກນີ້ພົບ 27 ເທື່ອໃນພຣະທັມປັນຍາຈານແລະສະແດງໃຫ້ເຫັນວ່າຊີວິດປາສຈາກການກ່ຽວພັນກັບພຣະເຈົ້າແລະຄວາມເປັນຢູ່ອັນຕລອດໄປເປັນນິດ. ເຖິງວ່າລາວເປັນຊາຍທີ່ເຕັມດ້ວຍຄວາມພຍາຍາມແລະຄວາມຊຳນານໃນອາຊີບຂອງລາວ, ໂຊໂລໂມນໄດ້ເລີ້ມ**ໝົດຫວັງ**ເມື່ອລາວຫຼິງເຫັນຄວາມບໍ່ຖາວອນຂອງວຽກງານ. ລາວໄດ້ຫຼິງເຫັນວ່າຜູ້ອື່ນໆຈະສືບຕໍ່ຄວບຄຸມເໜືອສິ່ງທັງປວງທີ່ເປັນຜົນສຳເຣັດຕ່າງໆຂອງລາວນັ້ນ. ລາວບໍ່ມີແນວຄ້ຳປະກັນອັນໃດວ່າຜູ້ທີ່ຈະແທນທີ່ຂອງລາວນັ້ນຈະໃຫ້ກຽດຕໍ່ການທຸ້ມເທຂອງລາວໃສ່ໃນວຽກງານນັ້ນ. ເຖິງແມ່ນວ່າຄົນທັງຫລາຍອາດຈະເອົາຊີວິດຂອງພວກເຂົາໄປລົງທຶນໃນວຽກງານກໍຕາມ, ແຕ່ກໍບໍ່ໄດ້ຮັບປະກັນວ່າພວກເຂົາຈະມີມໍຣະດົກໃນໂລກນີ້.

ພວກເຮົາຄວນຈະສຳຣວດຄວາມຕັ້ງໃຈຂອງພວກເຮົາໃນວຽກງານຂອງພວກເຮົາ. ພວກເຮົາຢາກປະອະນຸສອນໄວ້ເພື່ອໃຫ້ຄົນອື່ນເຫັນຄວາມສຳເຣັດໃນຜົນງານຂອງພວກເຮົາບໍ່? ໂຊໂລໂມນໄດ້ຮັບຄວາມທໍ້ຖອຍໃຈຕໍ່ຄວາມຄາດໝາຍຢ່າງນັ້ນແລະເວົ້າວ່າອັນນີ້ກໍ**ອະນິຈັງ**.

ພວກເຮົາຄວນຈະເຮັດວຽກໃຫ້ດີທີ່ສຸດຕາມຄວາມສາມາດຂອງພວກເຮົາ, ບໍ່ວ່າຈະເຮັດຢູ່ສະຖານທີ່ໃດຫຼືຢູ່ໃນເຮືອນກໍຕາມ. ພວກເຮົາຄວນຈະລົງທຶນໃນຄົນລຸ້ນໃໝ່ແລະຊອກຫາທາງສິ່ງຕໍ່**ສະຕິປັນຍາ**, **ຄວາມຮູ້**, ແລະ**ຄວາມຊຳນານ**ຂອງພວກເຮົາ. ພວກເຮົາຄວນຈະເຮັດວຽກລະຫວ່າງຊ່ວງເວລາຂອງພວກເຮົາແລະຕຽມຕົວທີ່ຈະຫຍັບຍ້າຍອອກເມື່ອເວລາຂອງພວກເຮົາສິ້ນສຸດລົງ. ຂໍ້ທີ 22 ໄດ້ເຕືອນພວກເຮົາວ່າຄວາມຮັ່ງມີບໍ່ແມ່ນສິ່ງສຳຄັນ. ຄວາມຢາກຮັ່ງມີທີ່ເກີດແກ່ຄົນທົ່ວໄປເພີ້ມຂຶ້ນຫຼາຍຊ່ຳໃດກໍເປັນເຄື່ອງໝາຍຊີ້ບອກເຖິງທັສນະໃນການເຮັດວຽກງານຕາມຫຼັກພຣະຄັມພີຫຼາຍຊ່ຳນັ້ນ.

## 2. <u>ວຽກຂອງຂ້າພະເຈົ້າ-ຄວາມຊົມຊື່ນຂອງຂ້າພະເຈົ້າ:</u> (ປັນຍາຈານ 2:24-26)

ມີຜູ້ນຶ່ງໄດ້ຖືກຖາມວ່າລາວເຮັດຢ່າງໃດຈຶ່ງມີ**ຄວາມຊົມຊື່ນຍິນດີ**ຫຼວງຫຼາຍໃນ**ວຽກ**ຂອງລາວ. ລາວໄດ້ຕອບວ່າວຽກອັນໃດກໍສາມາດມີຄວາມມ່ວນຊື່ນລົ້ນເລີງກັບມັນໄດ້, ຂໍແຕ່ວ່າຢ່າໃຫ້ເປັນວຽກທີ່ຕ້ອງໄດ້ທຳໃນຂນະນັ້ນ. ວຽກງານກາຍເປັນສິ່ງທີ່ໜ້າເບື່ອສຳລັບຫຼາຍໆຄົນ ແຕ່ວ່າກຸນແຈນັ້ນກໍຄືວ່າໃຫ້ມອງເຫັນມັນວ່າເປັນໜ້າທີ່ທີ່ຖືກມອບໝາຍໃຫ້**ຈາກພຣະຫັດຂອງພຣະເຈົ້າ**. ວຽກງານທີ່ໄດ້ເຮັດໃນການສະຖິດຢູ່ດ້ວຍຂອງພຣະເຈົ້າແລະກັບພຣະອົງໃນຫົວໃຈມັນເຮັດໃຫ້ຜູ້ມີ**ຄວາມຍິນດີໃນຊີວິດ**, ທັງໝົດເຫຼົ່ານີ້ເປັນຍ້ອນ**ພຣະອົງ**. ຄວາມຍິນດີອັນແທ້ຈິງຈະບໍ່ເກີດຂຶ້ນໄດ້ຖ້າເຫີນຫ່າງຈາກພຣະອົງ.

ພາກສ່ວນຂອງວຽກການທີ່ເປັນສ່ວນຈາກເບື້ອງເທິງທີ່ບໍ່ມີການປິດບັງກໍຄືວ່າຕ້ອງເບິ່ງຜ່ານເປົ້າໝາຍອັນສຸດຍອດຂອງມັນ. ພາກສ່ວນນຶ່ງນັ້ນກໍຄືການມອງເບິ່ງໃຫ້ເຫັນທັສນະທີ່ກວ້າງໄກໃນສິ່ງທີ່ພວກເຮົາເຮັດນັ້ນ. ຍົກຕົວຢ່າງ, ພວກເຮັດວຽກຮັບໃຊ້ໃນຖ້ຽວການບິນສາມາດເຫັນເປົ້າໝາຍວຽກຂອງພວກເຂົາວ່າເປັນການເຮັດໃຫ້ສະມາຊິກຄອບ

ຄົວໄດ້ເຕົ້າໂຮມກັນອີກໃນຊ່ວງວັນຢຸດພັກ. ນາຍຊ່າງແປງຣົດສາມາດເຫັນວ່າວຽກຂອງພວກເຂົາຄືການເຮັດໃຫ້ຄົນອື່ນມີເສຣີພາບ. ພະນັກງານໃນຮ້ານຄ້ານ້ອຍໃກ້ບ້ານກໍໄດ້ຊ່ວຍໃຫ້ຄົນມີເວລາເພີ້ມໃນການຢູ່ຮ່ວມກັບຄອບຄົວຕື່ມອີກ.

ກຸນແຈນັ້ນມັນບໍ່ແມ່ນແຕ່ໃຫ້ມອງເຫັນໜ້າທີ່ໆມີສ່ວນກັບການງານຂອງພວກເຮົາເທົ່ານັ້ນແຕ່ວ່າຮວມທັງຜົນສຸດທ້າຍຂອງມັນດ້ວຍ. ການມອງເຫັນໃນແງ່ນີ້ນຳຄວາມຊົມຊື່ນຍິນດີຕໍ່ການງານຂອງພວກເຮົາ.

ມີບາງຄັ້ງຄາວທີ່ພວກເຮົາໄດ້ອ່ານຂ່າວເຖິງການສ້າງທົນທາງທີ່ບໍ່ຈຳເປັນຕ້ອງສ້າງ. ລອງວາດພາບເບິ່ງວ່າການເຮັດວຽກໃນການສ້າງທາງທີ່ບໍ່ໄປເຖິງໃສ! ມັນຈະຫາຄວາມຊົມຊື່ນໃນການງານນັ້ນໄດ້ຢ່າງໃດ?

ອີກແງ່ນຶ່ງຂອງວຽກການທີ່ມີຄວາມໝາຍນັ້ນກໍຄືຄວາມຊຳນານ. ເມື່ອວຽກນັ້ນສຳເຣັດໂດຍດີ, ອາດຈະເປັນການຄວບຄຸມງົບປະມານຂອງຄອບຄົວຫຼືບໍຣິຫານບໍຣິສັດ, ທີ່ຮູ້ສຶກວ່າມີຄວາມເພິ່ງພໍໃຈແລະ**ຊົມຊື່ນຍິນດີ**ຕໍ່ຜົນຂອງມັນ. ແນ່ນອນ, ຄວາມຊຳນານນັ້ນມາຈາກໃສນອກຈາກຜ່ານ**ສະຕິປັນຍາ**ແລະ**ຄວາມຮູ້**? ໃນຖານະທີ່ເປັນຜູ້ມີຄວາມເຊື່ອພວກເຮົາຄວນຈະເພິ່ງອາສັຍການຊ່ວຍເຫຼືອຂອງພຣະເຈົ້າແລະພວກເຮົາຄວນຈະຊອກຫາຄວາມຊຳນານໃນໜ້າທີ່ການງານຂອງພວກເຮົາ. ນີ້ເປັນສິ່ງທີ່ພໍພຣະທັຍພຣະເຈົ້າແລະນຳຄວາມຊົມຊື່ນຍິນດີມາສູ່ຊີວິດຂອງພວກເຮົາ.

ໂຊໂລໂມນໝາຍຄວາມວ່າຢ່າງໃດເມື່ອລາວຂຽນວ່າແຕ່**ສ່ວນຄົນບາບ**ພຣະອົງປະທານງານທີ່ຕ້ອງເກັບກ່ຽວແລະສະສົມ **ເພື່ອໃຫ້ແກ່ຜູ້ທີ່ພຣະເຈົ້າພໍພຣະທັຍ**? ນີ້ບໍ່ໄດ້ໝາຍຄວາມວ່າພວກທີ່ບໍ່ເຊື່ອຈະຍອມມອບຄວາມຮັ່ງມີຂອງພວກເຂົາໃຫ້ແກ່ພວກຄຣິສຕຽນ (ດັ່ງທີ່ພວກເຮົາຮູ້ແລ້ວຈາກປະສົບການ). ແຕ່ວ່າ, ຄຳເວົ້າຂອງໂຊໂລໂມນໃນຂໍ້ທີ 26 ຊີ້ບອກວ່າພວກບໍ່ແມ່ນຄຣິສຕຽນທີ່ເຮັດວຽກໜັກໜ່ວງເພື່ອໄດ້ສິ່ງຂອງອັນຫຼວງຫຼາຍແຕ່ຈະອອກຈາກໂລກນີ້ໄປມືເປົ່າ-ຂນະທີ່ພວກຄຣິສຕຽນຈະຍືນຮັບມໍຣະດົກທຸກຢ່າງໃນຣາຊອານາຈັກໃນອະນາຄົດ. ພຣະທັມປັນຍາຈານໄດ້ເຕືອນພວກເຮົາວ່າຊີວິດນີ້ບໍ່ຈົບລົງດ້ວຍເຣື່ອງຣາວແລະຈຸດຕ່າງໆຊຶ່ງເປັນຄວາມຈິງທີ່ເໜືອໄປກວ່າຫລຸມຝັງສົບ.

## 3. <u>ວຽກການຂອງຂ້າພະເຈົ້າ-ຂອງຂວັນຈາກພຣະເຈົ້າ:</u> (ປັນຍາຈານ 5:18-20)

ໃນລະຫວ່າງອາທິດທີ່ຂຽນບົດຮຽນນີ້, ສະຖິຕິຂອງຄົນຫວ້າງງານກໍເພີ້ມຂຶ້ນໃນສະຫະຣັດອະເມຣິກາ. ໃນປີທີ່ແລ້ວກໍຍິ່ງຫຼາຍກວ່ານີ້ອີກ, ພວກທີ່ຍັງມີວຽກງານທຳກໍໜ້າຍິນດີຕໍ່ງານນັ້ນ.

ໃນຕອນຫຼັງນັ້ນ, ປົກກະຕິແລ້ວພວກຄົນງານຈະບໍ່ມີຈິດໃຈຂອບພຣະຄຸນສຳລັບໂອກາດໃນການຕື່ນຂຶ້ນໃນຕອນເຊົ້າ, ຍິນດີ ໃນມື້ນັ້ນແລະພຣະພອນທີ່ມີວຽກທີ່ຈະຕ້ອງໄປ. ການຂາດວຽກສ່ວນຫຼາຍກໍໄດ້ປ່ຽນແປງສິ່ງເຫຼົ່ານີ້. ແຕ່ວ່າ, ເຖິງແມ່ນວ່າສະຖານະການຂອງເສຖກິດຈະເປັນຢ່າງໃດກໍຕາມ, ພຣະຄັມພີໄດ້ສອນພວກເຮົາວ່າໃຫ້ພວກເຮົາ**ຍິນດີໃນບັນດາກິຈການຂອງຕົນ ທີ່ຕົນກະທຳພາຍໃຕ້ດວງອາທິດ**ໃນຊ່ວງເວລາອັນສັ້ນໆຂອງຊີວິດພວກເຮົາ.

ພວກເຮົາຄວນຈະຂອບຄຸນພຣະເຈົ້າສຳລັບ**ສິ່ງຂອງ**ທີ່ພວກເຮົາພົບເຫັນໃນວຽກການຂອງພວກເຮົາ. ຫຼາຍໄປກວ່ານັ້ນກໍໃຫ້ພວກເຮົາມີໂອກາດ**ກິນແລະດື່ມ**, ມັນຍັງມີຜົນດີແນວອື່ນອີກທີ່ເປັນ**ຣາງວັນ**ອັນໄດ້ມາຈາກການເຮັດວຽກງານ. ໃນຄາວທີ່**ຮັ່ງມີແລະອຸດົມສົມບູນ**ຊຶ່ງເປັນຜົນຈາກການເຮັດວຽກການກໍສາມາດຍິນດີກັບສິ່ງເຫຼົ່ານີ້ໄດ້ໂດຍທີ່ມັນບໍ່ເປັນອັນຕະລາຍຕໍ່ຊີວິດຂອງຜູ້ນັ້ນແລະຕໍ່ສາຍສຳພັນກັບພຣະເຈົ້າ. ຂນະທີ່ຄວາມຮັ່ງມີບໍ່ແມ່ນຜົນຕອບສນອງຂອງການເຮັດວຽກທີ່ຂຍັນແລະສລາດສເມີໄປ, ບາງຄົນກໍມີຄວາມຊົມຊື່ນຍິນດີກັບພຣະພອນ. ເມື່ອມັນຫາກເກີດຢ່າງນີ້ຂຶ້ນ, **ອັນນີ້ແມ່ນຂອງຂວັນທີ່ມາຈາກພຣະເຈົ້າ**.

ຣາງວັນອັນນຶ່ງທີ່ມາຈາກການເຮັດວຽກງານທີ່ມີຄວາມໝາຍ ກໍຄືເວລາທີ່ຜ່ານໄປໂດຍບໍ່ມີຄວາມໜ້າເບື່ອ. ເມື່ອຄົນໃດຄົນນຶ່ງຫາກເວົ້າວ່າ "ຂ້ອຍເກັບກຳເວລາໃນການເຮັດວຽກມື້ນີ້ບໍ່ໄດ້" ອັນນີ້ປົກກະຕິແລ້ວກໍເປັນເພາະວ່າຜູ້ນັ້ນກຳລັງເຮັດວຽກຢ່າງມີໝາກຜົນ. ຂອງຂວັນອັນນຶ່ງທີ່ມາຈາກພຣະເຈົ້າໃຫ້ແກ່ຜູ້ເຮັດວຽກງານກໍຄືເຂົາຈະບໍ່ຄິດວ່ານີ້ແມ່ນອີກມື້ນຶ່ງຂອງຊີວິດພວກເຂົາ. ບໍ່ມີຫຍັງທີ່ຈະເຮັດໃຫ້ການເຮັດວຽກແຕ່ລະມື້ເຄື່ອນໄປຢ່າງເຊື່ອງຊ້າກວ່າການຈອບເບິ່ງແຕ່ໂມງ. ໂຊກດີກໍຄືພວກທີ່ມີຄວາມຍິນດີທີ່ເຮັດໃຫ້ພວກເຂົາສຸມຢູ່ກັບວຽກນັ້ນຕລອດມື້.

ພວກເຮົາຈະສືບຕໍ່"ສຸມຢູ່" ກັບໜ້າທີ່ການງານຂອງພວກເຮົາຢ່າງໃດ? ເຮົາຈະສາມາດຍິນດີຢ່າງແທ້ຈິງກັບວຽກງານທີ່ເຮົາເຮັດນີ້ໄດ້ຢ່າງໃດ? ພວກເຮົາສາມາດເລີ້ມແນວນີ້ໂດຍການມອງເຫັນວ່າພຣະເຈົ້າໄດ້ປະທານມັນໃຫ້ແກ່ພວກເຮົາຊຶ່ງເປັນໂອກາດສໍາລັບສິ່ງຂອງຕ່າງໆ. ວຽກງານແຕ່ລະອັນ, ຈະແມ່ນຢູ່ໃນເຮືອນຫຼືນອກກໍຕາມ, ລ້ວນແລ້ວແຕ່ມີທາງທີ່ຈະເຮັດໃຫ້ມີຄວາມແຕກຕ່າງໃນຊີວິດແລະໃນຊີວິດຂອງຄົນອື່ນໆອີກດ້ວຍ.

ເມື່ອພວກເຮົາຍິນດີຊົມຊື່ນກັບວຽກການຂອງພວກເຮົາວ່າແມ່ນຂອງຂວັນຈາກພຣະເຈົ້າ, ແມ່ນພວກເຮົາຍອມໃຫ້ພຣະອົງເປີດຕາຂອງພວກເຮົາໃຫ້ເຫັນພຣະພອນຫຼາຍໆແນວຕື່ມອີກ. ພຣະເຈົ້າເປັນຜູ້ປະທານຂອງຂວັນທີ່ດີທຸກຢ່າງ (ຢາໂກໂບ 1:17), ດັ່ງນັ້ນພວກເຮົາຄວນຈະໄວ້ວາງໃຈໃນສະຕິປັນຍາຂອງພຣະອົງວ່າວຽກການງານນັ້ນເປັນຣາງວັນແກ່ພວກເຮົາ.

## ບົດຮຽນຊີວິດ

ມີສອງສາມຢ່າງທີ່ເປັນສິ່ງສາມັນທົ່ວໄປຕໍ່ມະນຸດກວ່າປະສົບການການເຮັດວຽກງານ. ເຖິງປານນັ້ນປະສົບການໆເຮັດວຽກມີຄວາມແຕກຕ່າງກັນໄປຢ່າງກວ້າງຂວາງ, ການເພິ່ງອາສັຍການເຂົ້າຮ່ວມມືຂອງພຣະເຈົ້າ. ເມື່ອໄດ້ມອງເຫັນວ່າພຣະອົງເປັນຜູ້ມອບວຽກການນັ້ນໃຫ້, ມັນກໍກາຍເປັນແຫຼ່ງທີ່ມາຂອງພຣະພອນ. ເມື່ອໄດ້ເລັງໃສ່ເປົ້າໝາຍຂອງພຣະອົງ, ມັນກໍກາຍເປັນແຫຼ່ງທີ່ມາຂອງຄວາມຈະເຣີນຂຶ້ນສ່ວນຕົວ.

ດັ່ງນັ້ນວຽກການຂອງທ່ານສາມາດເປັນໄປຕາມທຸກໆສິ່ງທີ່ພຣະເຈົ້າຕັ້ງພຣະທັຍເອົາໄວ້ສໍາລັບຊີວິດຂອງທ່ານຢ່າງໃດ?

- ສືບຕໍ່ຮັກສາທັສນະຂອງພຣະຄັມພີຕໍ່ວຽກງານ ຢ່າແຍກມັນອອກຈາກສິ່ງທີ່ພຣະເຈົ້າພຍາຍາມປະສົງທີ່ຈະເຮັດໃນຊີວິດຂອງທ່ານ. ໃຫ້ພຣະອົງມີສ່ວນໂດຍຜ່ານການເພິ່ງອາສັຍໃນການອ້ອນວອນອະທິຖານ.
- ມີສ່ວນໃນຊີວິດຂອງເພື່ອນຮ່ວມງານແລະລູກຄ້າຂອງທ່ານ. ໃນເວລາທີ່ເໝາະສົມ, ຂັນອາສາອະທິຖານເພື່ອພວກເຂົາແລະຄວາມຕ້ອງການໃນຊີວິດຂອງພວກເຂົາ.
- ສະແດງກິຣິຍາເຖິງຄວາມຮູ້ບຸນຄຸນສໍາລັບວຽກງານທີ່ທ່ານມີຢູ່, ຈໍາໄວ້ວ່າມີຫຼາຍຄົນທີ່ບໍ່ມີພຣະພອນຝ່າຍວຽກການງານ.
- ສືບຕໍ່ຊີວິດທີ່ນອກຈາກການເຮັດວຽກງານ. ລະຫວ່າງວຽກການແລະຄອບຄົວຂອງທ່ານຈົ່ງໃຫ້ມັນສົມດູນກັນ.

ອຸປຖັມໂດຍ ລາວຊາວເທີນບັບຕິສສັມພັນ www.lsbf.org ແປໂດຍ PA